*Journal of Science and Teacher Education (JLSTE), 2*(1), 145-154
**P-ISSN**: 3078-5405; **E-ISSN**: 3080-2628

# ສຶກສາປັດໄຈທີ່ເປັນຜົນຕໍ່ການຮຽນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວ ຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ໂຮງຮຽນມັດທະຍົມສາທິດ ວິທະຍາໄລຄູສະຫວັນນະເຂດ ສົກຮຽນ 2023-2024

*ນາງ ຄູນມີ ພົມມະນີວົງ**

*ພາກວິຊາສ້າງຄູພາສາລາວ-ວັນນະຄະດີ, ວິທະຍາໄລຄູສະຫວັນນະເຂດ*

## ບົດຄັດຫຍໍ້

ການຄົ້ນຄວ້າຄັ້ງນີ້ມີຄວາມສຳຄັນຫຼາຍໂດຍສະເພາະການຈັດກິດຈະກຳ ການຮຽນ-ການສອນໂດຍເນັ້ນໃຫ້ນັກຮຽນປະຕິບັດຕົວຈິງ ຄືການວິເຄາະບົດເລື່ອງວັນນະຄະດີລາວ ເພື່ອປະຕິບັດຕາມວິທີ ຂັ້ນຕອນຂອງການວິເຄາະບົດເລື່ອງວັນນະຄະດີ. ຈຸດປະສົງຂອງການຄົ້ນຄວ້ານີ້ແມ່ນເພື່ອສຶກສາປັດໄຈທີ່ສົ່ງຜົນຕໍ່ການຮຽນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ແລະ ເພື່ອໃຫ້ນັກຮຽນມີຄວາມມັກ ຄວາມເຂົ້າໃຈເພິ່ງພໍໃຈລະດັບໃດໜຶ່ງຕໍ່ການຮຽນ-ການສອນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວ. ກຸ່ມຕົວຢ່າງແມ່ນນັກຮຽນມັດທະຍົມສາທິດປີທີ 3 ມີຈຳນວນ 21 ຄົນ ການເກັບກຳຂໍ້ມູນແມ່ນໄດ້ຈາກການຈັດກິດຈະກຳການຮຽນ-ການສອນຕົວຈິງ. ຜົນການຄົ້ນຄວ້າພົບວ່າ ກ່ອນການສອນ ນັກຮຽນໃນຫ້ອງທັງໝົດຢູ່ໃນລະດັບອ່ອນຫຼາຍຫາດີ. ນັກຮຽນມີບັນຫາຫຼາຍສຸດແມ່ນບົດເລື່ອງວັນນະຄະດີລາວ ຍັງເປັນເລື່ອງເລົ່າປາກຕໍ່ປາກ (ເລົ່າປາກເປົ່າ), ຍັງເປັນຄຳຮ້ອຍກອງ, ບໍ່ໄດ້ຈັດການຮຽບຮຽງ ແລະ ຈັດພິມຂຶ້ນໃໝ່. ບົດເລື່ອງວັນນະຄະດີລາວທີ່ນຳມາຮຽນມາສອນຍັງເປັນເລື່ອງດັ່ງເດີມບໍ່ໄດ້ປະຍຸກ ບໍ່ໄດ້ນຳໄປສະແດງເປັນຮູບເງົາ, ວິດີໂອ, ສະແດງລະຄອນ ແລະ ສະແດງເທິງເວທີ. ການສອນວິເຄາະບົດເລື່ອງວັນນະຄະດີຄູສອນຕ້ອງທົບທວນທິດສະດີວິທີການ, ຂັ້ນຕອນການວິເຄາະເລື່ອງວັນນະຄະດີກ່ອນສອນ. ການສອນວິເຄາະບົດເລື່ອງວັນນະຄະດີລາວ ຄູສອນຕ້ອງແນະນຳໃຫ້ເວລາອ່ານ ຄົ້ນຄວ້າບົດເລື່ອງວັນນະຄະດີລາວ ກ່ອນລ່ວງໜ້າ, ຄິດເປັນເປີເຊັນເທົ່າກັບ 95.23%; ຫ້ອງຮຽນຕ້ອງບໍ່ໃຫ້ມີສຽງດັງລົບກວນ ຄິດເປັນເປີເຊັນ 76.19% ແລະ ບັນຫາອື່ນໆ. ຜົນການປະເມີນຫຼັງການຮຽນພົບວ່າມີນັກຮຽນພຽງ 2 ຄົນທີ່ຢູ່ລະດັບອ່ອນ ກວມເອົາ 9.52%; ແລະ ຢູ່ໃນເກນປານກາງ ຫາ ດີຫຼາຍ ມີຈຳນວນ 19 ຄົນ ກວມເອົາ 90.47%.

***ຄຳສັບສຳຄັນ:*** *ປັດໄຈ, ການຮຽນ, ການວິເຄາະບົດເລື່ອງ, ວັນນະຄະດີລາວ*

**ຂໍ້ມູນບົດຄວາມ**

**ຕິດຕໍ່ພົວພັນ: ຄູນມີ ພົມມະນີວົງ ໂທ: 02055863564;*

*ອີເມວ: phommanevong k@gmail.com*

Received 5 August 2025
Received in revised form 25 December 2025
Accepted 24 January 2026

This is an open access article under the CC BY license (https://creativecommons.org/licenses/by/4.0/)

**P-ISSN**: 3078-5405; **E-ISSN**: 3080-2628

# A Study of Factors Affecting the Learning of Literary Text Analysis in the Lao Literature Subject among Grade 8 Students at the Demonstration Secondary School of Savannakhet Teacher Training College, Academic Year 2023–2024

*Khounmy Phommanevong**
*Department of Lao Language and Literature, Savannakhet Teacher Training College*

## Abstract

This research is highly significant, particularly in organizing teaching and learning activities that emphasize students' active participation in practice, specifically the analysis of Lao literary texts according to the methods and procedures of literary analysis. The objectives of this study are to investigate the factors affecting students' learning in analyzing literary texts in the Lao literature subject among Grade 8 secondary school students, and to examine the level of students' interest, understanding, and satisfaction with the teaching and learning of literary text analysis in Lao literature. The sample group consisted of 21 Grade 8 demonstration secondary school students. Data were collected through the implementation of actual teaching and learning activities. The research results found that before the instruction, all students in the class were at levels ranging from very weak to good. The most significant problem faced by students was that Lao literary texts are still largely transmitted through oral storytelling traditions. They remain in poetic forms and have not yet been systematically compiled or newly published. The Lao literary texts used for teaching are still in their traditional forms and have not been adapted into other media such as films, videos, theatrical performances, or stage presentations. In teaching literary text analysis, teachers must review the theoretical approaches and procedures for analyzing literary texts before teaching. Teachers should also encourage students to read and study Lao literary texts in advance, which accounted for 95.23%. The classroom environment should also be free from noise disturbances, accounting for 76.19%, along with other related issues. The post-learning evaluation results indicated that only 2 students remained at the weak level, accounting for 9.52%, while 19 students were at the moderate to very good levels, accounting for 90.47%.

***Keywords***: *Factors affecting, Students' learning, Analysis of literary texts, Lao literature.*

**ARTICLE INFO**

Received 5 August 2025
Received in revised form 25 December 2025
Accepted 24 January 2026

**Correspondence: Khounmy Phommanevong; Tel: 20 55863564;*
*Email: phommanevong.k@gmail.com*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ເພື່ອປະຕິບັດຕາມແຜນພັດທະນາການສຶກສາໃນໄລຍະໃໝ່, ນຳເອົາຄວາມຮູ້ທາງດ້ານວິທະຍາສາດ ເຂົ້າໃນການຮຽນການສອນ; ການສອນວິເຄາະບົດເລື່ອງວັນນະຄະດີລາວ ຈຶ່ງຖືວ່າເປັນສິ່ງສຳຄັນ ແລະ ຈຳເປັນໃນການຄົ້ນຄວ້າຫາຄວາມຮູ້ໃຫ້ແກ່ນັກຮຽນໄດ້ເປັນຢ່າງດີ ເພາະວ່າການວິເຄາະ ແມ່ນຮິ່ນຕອງ, ພິຈາລະນາ, ວິເຄາະ, ແຍກອອກເປັນສ່ວນໆ; ຄູຈະມີຄວາມຊຳນິຊຳນານ, ມີຄວາມຮູ້ຕ້ອງຜ່ານການວິເຄາະບົດເລື່ອງວັນນະຄະດີ ແລະ ວິເຄາະບັນຫາ, ບົດເລື່ອງຕ່າງໆ ເປັນຕົ້ນແມ່ນໃນລາຍວິຊາວັນນະຄະດີ ທີ່ມີການນຳໃຊ້ການວິເຄາະວິທີຕ່າງໆ ເຂົ້າໃນການຮຽນການສອນ ໃນການຄົ້ນຄວ້າ ບົດປະພັນວັນນະຄະດີປະເພດຕ່າງໆ ວ່າບັນຫາ, ເນື້ອໃນ, ຕົວລະຄອນ, ສິລະປະການແຕ່ງ ແລະ ບັນຫາຕ່າງໆ ເປັນແນວໃດນັ້ນ ຕ້ອງຜ່ານການວິເຄາະ ຈຶ່ງສາມາດຮູ້ໄດ້ຕາມຈຸດປະສົງ.

ການສຶກສາກ່ຽວກັບປັດໄຈແມ່ນມີຄວາມສຳຄັນຫຼາຍ ເພາະປັດໄຈທີ່ສົ່ງຜົນຕໍ່ການຮຽນໝາຍເຖິງ ອຸປະສັກຂໍ້ບົກຜ່ອງໃນການຮຽນເຊິ່ງເຮັດໃຫ້ຜົນການຮຽນຕ່ຳກວ່າເປົ້າໝາຍທີ່ກຳນົດ ບັນຫາການຮຽນອາດຈະມາຈາກສະພາບແວດລ້ອມ, ເນື້ອຫາວິຊາ, ສື່ອຸປະກອນທີ່ໃຊ້ໃນການຮຽນ-ການສອນ ແລະ ຕົວຂອງນັກຮຽນ. ຈາກການຖືກມອບໝາຍໃຫ້ສອນວິຊາ ວັນນະຄະດີລາວ ຢູ່ຫ້ອງປີທີ 3, ສົກຮຽນ 2023-2024 ຈົນຈົບພາກຮຽນ ແລະ ຜ່ານການດຳເນີນການຮຽນການສອນ ແລະ ນຳພານັກຮຽນໃນຫ້ອງດັ່ງກ່າວຄົ້ນຄວ້າວິຊາວັນນະຄະດີລາວ ເປັນເວລາ 8 ເດືອນ ແລະ ຜ່ານການສັງເກດເບິ່ງນັກຮຽນຫ້ອງດັ່ງກ່າວໃນເວລາທີ່ຄູໃຫ້ວິເຄາະບົດເລື່ອງວັນນະຄະດີລາວ ປະເພດຕ່າງໆ; ນັກຮຽນມີບັນຫາບໍ່ສາມາດດຳເນີນໄປຕາມວິທີຂັ້ນຕອນ ແລະວິເຄາະບັນຫາ, ເນື້ອໃນ , ຕົວລະຄອນ ແລະ ບັນຫາຕ່າງໆ ໃນບົດເລື່ອງວັນນະຄະດີ.

ດັ່ງນັ້ນ, ຈຶ່ງເປັນສາເຫດທີ່ເຮັດໃຫ້ຂ້າພະເຈົ້າມີຄວາມສົນໃຈຢາກສຶກສາ ແລະ ປະຕິບັດການວິໄຈກ່ຽວກັບການຮຽນວິເຄາະບົດເລື່ອງວັນນະຄະດີລາວ ໃຫ້ນັກຮຽນ ຫ້ອງປີທີ 3 ຈຳນວນ

ນີ້ ມີປັດໄຈໃດແດ່ເປັນຜົນກະທົບຕໍ່ການຮຽນການສອນ ວິ ເຄາະ ບົດເລື່ອງໃນວິຊາວັນນະຄະດີລາວ ເພື່ອຊອກຫາປັດໄຈຂອງບັນ ຫາທີ່ຈະນຳໄປສູ່ແນວທາງແກ້ໄຂທີ່ເປັນຜົນກະທົບໃນການຮຽນ ການສອນ ວິເຄາະບົດເລື່ອງໃນວິຊາວັນນະຄະດີລາວ ດັ່ງກ່າວໃຫ້ ນັກ ຮຽນມີຄວາມມັກ ຄວາມເຂົ້າໃຈ ເພິ່ງພໍໃຈລະດັບໃດໜຶ່ງຕໍ່ ການຮຽນການສອນ ວິເຄາະບົດເລື່ອງໃນວິຊາວັນນະຄະດີລາວໃຫ້ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ.

*1.2. ຄຳຖາມຂອງການຄົ້ນຄ້ວາ*

1. ມີປັດໄຈໃດແດ່ທີ່ສົ່ງຜົນກະທົບຕໍ່ການຮຽນວິເຄາະ ບົດເລື່ອງໃນວິຊາວັນນະຄະດີຂອງນັກຮຽນມັດທະຍົມຊັ້ນປີທີ 3?

2. ເຮັດແນວໃດໃຫ້ນັກຮຽນມີຄວາມມັກ ຄວາມ ເຂົ້າໃຈ ເພິ່ງພໍໃຈລະດັບໃດໜຶ່ງຕໍ່ການຮຽນ-ການສອນວິເຄາະບົດ ເລື່ອງໃນວິຊາວັນນະຄະດີລາວ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1. ເພື່ອສຶກສາປັດໄຈທີ່ສົ່ງຜົນຕໍ່ການຮຽນວິເຄາະບົດ ເລື່ອງໃນວິຊາວັນນະຄະດີລາວຂອງນັກຮຽນຊັ້ນມັດທະຍົມສຶກສາປີ ທີ 3.

2. ເພື່ອໃຫ້ນັກຮຽນມີຄວາມມັກ ຄວາມເຂົ້າໃຈ ເພິ່ງ ພໍໃຈລະດັບໃດໜຶ່ງຕໍ່ການຮຽນ-ການສອນວິເຄາະບົດເລື່ອງໃນ ວິຊາວັນນະຄະດີລາວ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ສຸວະພັດ ແກ້ວກ້າ (2011) ໄດ້ສະເໜີວິທະຍານິພົນ ເລື່ອງ " ປັດໄຈທີ່ສົ່ງຜົນຕໍ່ບັນຫາການຮຽນຂອງນັກຮຽນຊ່ວງຊັ້ນ ທີ 2 ໂຮງຮຽນວັດເມທັງກຣາວາສ (ເທດລັດຣາດຖະນຸກູນ) ການ ວິໄຈ" ໂດຍມີຈຸດປະສົງເພື່ອສຶກສາປັດໄຈທີ່ສົ່ງຜົນຕໍ່ບັນຫາການ ຮຽນຂອງນັກຮຽນຊ່ວງຊັ້ນທີ 2 ໂຮງຮຽນວັດເມທັງກຣາວາສ (ເທດລັດຣາດຖະນຸກູນ/ປີການສຶກສາ 2552 ໂດຍຈຳແນກປັດໄຈ ທີ່ສຶກສາເປັນ 3 ດ້ານ ຄືປັດໄຈສ່ວນຕົວ ໄດ້ແກ່ຜົນສຳຜັດທາງ ການຮຽນ ບຸກຄະລິກກະພາບ ແລະ ນິໄສທາງການຮຽນ, ປັດໄຈ ດ້ານຄອບຄົວໄດ້ແກ່ ການເອົາໃຈໃສ່ທາງການຮຽນຂອງຜູ້ປົກຄອງ ແລະ ຖານະທາງເສດຖະກິດຂອງຄອບຄົວ ແລະ ປັດໄຈດ້ານ ສິ່ງແວດລ້ອມໃນໂຮງຮຽນ ໄດ້ແກ່ລັກສະນະທາງກາຍະພາບທາງ ການຮຽນ ສຳພັນທະພາບລະຫວ່າງນັກຮຽນກັບຄູ ແລະ ສຳພັນທະ ພາບລະຫວ່າງນັກຮຽນກັບເພື່ອນ.

ງາມລັດ ຜະດຸງກູນ (2545) ໄດ້ສຶກສາບັນຫາທາງດ້ານ ການຮຽນຂອງນັກສຶກສາໂຄງການປະຕິຮູບການສຶກສາເພື່ອຊີວິດ ໃນວິທະຍາໄລກະເສດ ແລະ ເທັກໂນໂລຢີ ພາກກາງຈຳນວນ 360 ຄົນ ພົບວ່າ 1) ນັກນັກສຶກສາໂຄງການປະຕິຮູບການສຶກສາເພື່ອ ຊີວິດໃນວິທະຍາໄລກະເສດ ແລະ ເທັກໂນໂລຢີ ພາກກາງ ມີ ບັນຫາການຮຽນທີ່ກ່ຽວກັບຕົວນັກສຶກສາການສອນຂອງອາຈານ ແລະ ຫຼັກສູດເນື້ອຫາ ອຸປະກອນຕຳລາຢູ່ໃນລະດັບປານກາງ. 2) ນັກສຶກສາມີແນວທາງແກ້ໄຂບັນຫາດັ່ງກ່າວຢູ່ໃນລະດັບປານກາງ. 3) ປຽບທຽບບັນຫາທາງດ້ານການຮຽນຈຳແນກຕາມເພດ ແລະ ລະດັບຊັ້ນປີພົບວ່າ ນັກສຶກສາມີເພດຕ່າງກັນມີບັນຫາໃນດ້ານການ ຮຽນບໍ່ແຕກຕ່າງກັນທາງສະຖິຕິທີ່ລະດັບ.05

ພາລະດີ ພັກດີໂຍທິນ (2560) ປັດໄຈທີ່ສົ່ງຜົນຕໍ່ ຄວາມສຸກໃນການຮຽນ ຜົນສຳຜັດທາງການຮຽນ ແລະ ທັກສະ ຂະບວນການທາງວິທະຍາສາດຂອງນັກຮຽນຊັ້ນມັດທະຍົມສຶກສາ ປີທີ 3 ສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາ ເຂດ 2 ປະລິນຍານິພົນ ກສມ (ວິທະຍາການທາງການສຶກສາ ແລະ ການຈັດການ ການຮຽນຮູ້) ຜົນການວິໄຈຄັ້ງນີ້ພົບວ່າ 1. ການເຮັດວຽກຮ່ວມກັນທີ່ມີປະສິດທິພາບ ລະຫວ່າງຕົວແປປັດໄຈ ປັດໄຈໄດ້ແກ່ ພຶດຕິກຳການຈັດການຮຽນ-ການສອນຕາມສະພາບ ຕົວຈິງຂອງຄູ ແລະ ການສ້າງສຳພັນທະພາບລະຫວ່າງຄູກັບ ນັກຮຽນກັບຕົວແປຕາມໄດ້ແກ່ ຄວາມສຸກໃນການຮຽນຂອງ ນັກຮຽນຂອງນັກຮຽນ ຜົນສຳຜັດທາງການຮຽນ ແລະ ທັກສະ ຂະບວນການທາງວິທະຍາສາດມີຄ່າ (R) ເທົ່າກັບ.834.475 ແລະ .239 ຕາມລຳດັບ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ. 01 ໂດຍຕົວແປຕົ້ນທັງ 2 ຕົວ ຮ່ວມກັນອະທິບາຍຄວາມປ່ຽນແປງ ຂອງຄວາມສຸກໃນການຮຽນຂອງນັກຮຽນ ຜົນສຳຜັດທາງການ ຮຽນ ແລະ ທັກສະຂບວນການທາງວິທະຍາສາດໄດ້ລ້ອຍລະ 69.6 22.6 ແລະ 5.7 ຕາມລຳດັບ.2. ພຶດຕິກຳການຈັດການ ຮຽນ-ການສອນຕາມສະພາບຈິງຂອງຄູສົ່ງຜົນທາງບວກຕໍ່ ຄວາມສຸກໃນການຮຽນຂອງນັກຮຽນ ມີຄ່ານ້ຳໜັກຄວາມສຳຄັນ (B) ເທົ່າກັບ .145 ແລະ ສົ່ງຜົນທາງລົບຕໍ່ຜົນສຳຜັດທາງການ ຮຽນ ຄ່ານ້ຳໜັກຄວາມສຳຄັນ(B) ເທົ່າກັບ .235 ຢ່າງສຳຄັນ ສະຖິຕິທີ່ລະດັບ 01 ແຕ່ບໍ່ສົ່ງຜົນຕໍ່ທັກສະຂະບວນການທາງ ວິທະຍາສາດ. 3. ການສ້າງສຳພັນທະພາບລະຫວ່າງຄູກັບນັກຮຽນ ສົ່ງຜົນທາງບວກຕໍ່ຄວາມສຸກໃນການຮຽນຂອງນັກຮຽນຜົນສຳຜັດ ທາງການຮຽນ ແລະ ທັກສະຂະບວນການທາງວິທະຍາສາດ ໂດຍ ມີຄ່ານ້ຳໜັກຄວາມສຳຄັນ (B) ເທົ່າກັບ. 757.536 ແລະ .254 ຕາມລຳດັບຢ່າງສຳຄັນທາງສະຖິຕິທີ່ລະດັບ .01

## 3. ວິທີດຳເນີນການຄົ້ນຄວ້າ

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ ເປັນນັກຮຽນ ປີ ທີ 3 ສົກຮຽນ 2023-2024 ໂຮງຮຽນມັດທະຍົມສາທິດ ວິທະຍາໄລຄູສະຫວັນນະເຂດ ລວມມີ: 21 ຄົນ ຍິງ 11 ຄົນ.

**P-ISSN**: 3078-5405; **E-ISSN**: 3080-2628

ການສຶກສາຄັ້ງນີ້ ເປັນການສຶກສາຈາກປະຊາກອນ ຫຼື ກຸ່ມເປົ້າໝາຍໂດຍກົງ ເນື່ອງຈາກວ່າປະຊາກອນມີຈຳນວນໜ້ອຍ ເປັນນັກຮຽນ ປີທີ 3 ສົກຮຽນ 2023-2024 ໂຮງຮຽນ ມັດທະຍົມສາທິດ ວິທະຍາໄລຄູສະຫວັນນະເຂດ ລວມມີ: 21 ຄົນ ຍິງ 11 ຄົນ. ສາເຫດທີ່ເລືອກເອົານັກຮຽນຫ້ອງນີ້ເປັນກຸ່ມ ຕົວຢ່າງສຳລັບການວິໄຈ ກໍຍ້ອນວ່ານັກວິໄຈເປັນຄູສອນວິຊາ ວັນນະຄະດີລາວ ປະຈຳຢູ່ໃນຫ້ອງສະດວກໃນການດຳເນີນການ ວິໄຈ ເຊິ່ງນຳໃຊ້ທິດສະດີຂອງ ກົງຈັນ ພະເນືອງ.

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ໃນການສຶກສາຄັ້ງນີ້ຜູ້ວິໄຈໄດ້ໃຊ້ວິທີການສັງເກດ ແລ້ວ ໃຊ້ແບບສອບຖາມສັງລວມຄວາມຄິດເຫັນ ຂອງນັກຮຽນໃນຫ້ອງ ຮຽນ ແລະ ແບບປະເມີນ ນັກຮຽນໃນຫ້ອງເປົ້າໝາຍ (ຫ້ອງ ມ3)

ການສ້າງເຄື່ອງມືຄະນະຜູ້ສຶກສາໄດ້ດຳເນີນການສ້າງເຄື່ອງມື ຕາມຂັ້ນຕອນດັ່ງນີ້:

- ສຶກສາເອກະສານ ແລະ ລາຍງານວິໄຈທີ່ກ່ຽວຂ້ອງມາ ເປັນແນວທາງ.
- ສຶກສາສະພາບການຮຽນການສອນຂອງນັກຮຽນໃນ ຫ້ອງປີທີ 3.ໃນໄລຍະລົງສອນຕົວຈິງ ເພື່ອນຳມາເປັນແນວທາງ.
- ການສ້າງແບບສອບຖາມ ສະແດງຄວາມຄິດເຫັນ ແມ່ນດຳເນີນເອົາຕາມສະພາບການຮຽນການສອນ ໃນ ວິຊາວັນນະຄະດີລາວ ຂອງນັກຮຽນຊັ້ນປີທີ 3 ມັດທະຍົມສາທິດ.

- ແບບສອບຖາມກ່ຽວກັບ "ສຶກສາປັດໄຈທີ່ສົ່ງຜົນຕໍ່ ການຮຽນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວຂອງ ນັກຮຽນຊັ້ນມັດທະຍົມສຶກສາປີທີ 3"

1. ແບບສອບຖາມເພື່ອການວິໄຈ ສະບັບນີ້ ໄດ້ສ້າງຂຶ້ນ ໂດຍມີຈຸດປະສົງເພື່ອສຶກສາປັດໄຈທີ່ເປັນຜົນຕໍ່ການ ຮຽນວິເຄາະບົດເລື່ອງໃນໃນວິຊາວັນນະຄະດີລາວໃຫ້ ນັກຮຽນມັດທະຍົມສຶກສາຊັ້ນປີທີ 3 ວິທະຍາໄລຄູ ສະຫວັນນະເຂດ.
2. ແບບສອບຖາມມີຄຳຖາມຈຳນວນ 19 ຂໍ້ ທຸກຂໍ້ຈະມີຂໍ້ ມູນຈະຕ້ອງຕອບຢູ່ 1 ສະພາບຄື ຕາມປັດໄຈທີ່ເປັນຈິງ ຜູ້ວິໄຈມີຄວາມຕ້ອງການຢາກສຶກສາກ່ຽວກັບປັດໄຈທີ່ເປັນຜົນຕໍ່ ການຮຽນວິເຄາະບົດເລື່ອງໃນວິຊາ ວັນນະຄະດີລາວ ໃຫ້ນັກຮຽນ ມັດທະຍົມສຶກສາຊັ້ນປີທີ 3 ໃນ 4 ດ້ານ ດັ່ງນີ້: 1) ປັດໄຈທົ່ວໄປ, 2) ປັດໄຈຕໍ່ນັກສຶກສາ, 3) ປັດໄຈຕໍ່ຄູສອນ, 4) ປັດໄຈ ສະຖານທີ່)
3. ແບບສອບຖາມສະບັບນີ້ ແບ່ງອອກເປັນ 2 ຕອນດັ່ງນີ້:

**ຕອນທີ 1:** ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ເປັນແບບ ສອບຖາມ ທີ່ມີລັກສະນະກວດສອບລາຍການ (Checklist) ມີຈຳນວນ 4 ຂໍ້ ໄດ້ແກ່ເພດ ອາຍຸ.

**ຕອນທີ 2:** ຄວາມຄິດເຫັນກ່ຽວກັບຄວາມຕ້ອງການ ແລະ ຈຳເປັນ ໃນການຮຽນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວໃຫ້ ນັກຮຽນຊັ້ນມັດທະຍົມປີທີ 3 ຕາມປັດໄຈທີ່ເປັນຈິງ ມີລັກສະນະ ເປັນມາດຕະສ່ວນປະເມີນຄ່າ (Rating Scale) ມີ 5 ລະດັບ ຄື ມີ ຄວາມຕ້ອງການຈຳເປັນໃນການການຮຽນວິເຄາະບົດເລື່ອງໃນວິຊາ ວັນນະຄະດີລາວໃຫ້ນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ວິທະຍາໄລຄູສະຫວັນນະເຂດ. ຕາມປັດໄຈທີ່ເປັນຈິງດັ່ງນີ້: ໜ້ອຍ ສຸດ, ໜ້ອຍ, ປານກາງ, ຫຼາຍ, ຫຼາຍທີ່ສຸດ.

*3.3 ວິທີເກັບກຳຂໍ້ມູນ*

ນັກວິໄຈໄດ້ເກັບກຳຂໍ້ມູນດ້ວຍວິທີການສັງເກດໃນການ ສອນ, ໃຊ້ແບບສອບຖາມສັງລວມຄວາມຄິດເຫັນ, ໃຊ້ຕາຕະລາງ ບັນທຶກຂໍ້ມູນຕົວຈິງສຳລັບການວິເຄາະຂໍ້ມູນແລ້ວສົນທະນາເພື່ອ ຖອດຖອນບົດຮຽນພາຍໃນໜ່ວຍງານພາສາລາວ-ວັນນະຄະດີ ເພື່ອກຳນົດບັນຫາທີ່ເກີດຂຶ້ນຕໍ່ກັບການສອນວິເຄາະບົດເລື່ອງວິຊາ ວັນນະຄະດີລາວ ການວິໄຈໂດຍດຳເນີນໄປຕາມ 5 ບາດກ້າວຂອງ ການວິໄຈພາກປະຕິບັດ.

(ໃນວິຊາ ວັນນະຄະດີລາວ ບົດທີ 5 ວັນທີ 21/11/2023) ໂດຍ ນັກວິໄຈເຂົ້າຮ່ວມເກັບກຳບັນຫາ.

ຜ່ານການປະເມີນກ່ອນຈະໃຊ້ບົດທົດສອບກ່ອນ ແລະ ຫຼັງການສອນ ເພື່ອນຳມາປຽບທຽບກັນ ແລະ ແບບສອບຖາມ ການສຳຫຼວດຄວາມຄິດຄຳເຫັນ ຂອງນັກຮຽນພາຍໃນຫ້ອງຂາດ ຄວາມສົນໃຈເວລາທີ່ຄູໃຫ້ວິເຄາະບົດເລື່ອງວັນນະຄະດີລາວ ບໍ່ໄດ້ ຕາມຈຸດປະສົງໃຫ້; ບາງບົດເລື່ອງວັນນະຄະດີລາວຍັງເປັນຄຳຮ້ອຍ ກອງ ຫຼື ກອນອ່ານສັງສອນສັງວາດ; ບົດເລື່ອງວັນນະຄະດີລາວ ຍັງມີຈຳນວນໜ້ອຍທີ່ໄດ້ຈັດພິມຂຶ້ນໃໝ່ (ສ່ວນໃຫຍ່ເປັນເລື່ອງ ເລົ່າປາກເປົ່າ ໂອກາດໃນການໄດ້ສຳພັດ ແລະ ທຳຄວາມເຂົ້າໃຈ ກ່ຽວກັບບົດເລື່ອງວັນນະຄະດີມີໜ້ອຍ); ບົດເລື່ອງວັນນະຄະດີ ລາວ ທີ່ນຳມາຮຽນຍັງເປັນເລື່ອງດັ່ງເດີມບໍ່ໄດ້ປະຍຸກ ບໍ່ໄດ້ນຳໄປ ສະແດງເປັນຮູບເງົາ, ວີດີໂອ, ສະແດງລະຄອນ ແລະ ສະແດງເທິງ ເວທີ; ນັກຮຽນ (ບໍ່ມີຄວາມມັກ) ຂາດການຄົ້ນຄວ້າ ບົດເລື່ອງ ວັນນະຄະດີລາວ. ຜ່ານການສັງເກດຈຶ່ງຖອດຖອນ ແລະ ຊອກ ເຫັນສາເຫດຕື່ມອີກຕາມການໄປສຳພາດນັກຮຽນປາກເປົ່າ ໂດຍ ຕັ້ງຫົວຂໍ້ວ່າ ຈະນຳໃຊ້ການວິເຄາະບົດເລື່ອງວັນນະຄະດີວິທີໃດ ນັກຮຽນ ຈຶ່ງສົນໃຈ ແລະ ເຂົ້າໃຈໃນເວລາສອນ.

ດັ່ງນັ້ນ, ຈຶ່ງດຳເນີນການປະເມີນຫຼັງໃນຫ້ອງ ເປົ້າໝາຍ (ຊັ້ນປີທີ ມ 3. ນັກຮຽນມັດທະຍົມ) ໃນຊົ່ວຮຽນ ວິຊາ ວັນນະຄະດີລາວ ເຊິ່ງແມ່ນນັກວິໄຈເຂົ້າຮ່ວມປະເມີນ ແລະ ເກັບກຳພາບ.

ໃນການດຳເນີນການວິໄຈ ຂອງພວກຂ້າພະເຈົ້າໃນຄັ້ງນີ້ ເຖິງວ່າ ໄດ້ຮັບຜົນສຳເລັດລະດັບດີກໍຕາມ ແຕ່ຍັງມີບັນຫາໃໝ່ເກີດ ຂຶ້ນເຊັ່ນ: ຍັງມີນັກຮຽນຈຳນວນ 7 ຄົນ ທີ່ຍັງມີບັນຫາໃນການ ວິເຄາະບົດເລື່ອງວັນນະຄະດີລາວ ບໍ່ທັນບັນລຸຕາມຈຸດປະສົງຂອງ ການວິໄຈ; ສາເຫດແມ່ນ: 1). ນັກຮຽນຂາດຄວາມສົນໃຈ (ຍ້ອນ ຄວາມຮັບຮູ້ບໍ່ຕໍ່ເນື່ອງ), 2). ບໍ່ມີໃຈມັກໃນການວິເຄາະບົດເລື່ອງ ວັນນະຄະດີ (ວິເຄາະດ້ວຍການບັງຄັບ), 3). ບໍ່ຮູ້ແນວຈະຕອບ ເພາະບໍ່ເຂົ້າໃຈ ແລະບໍ່ຮູ້ແນວຈະຖາມ, 4). ຜ່ານມາບໍ່ໄດ້ລົງເລິກ

ວັນນະຄະດີ ສະເພາະ ດັ່ງນັ້ນ, ນັກວິໄຈຈຶ່ງຊອກຫາວິທີແກ້ໄຂບັນຫາຄືນໃໝ່.

ເພື່ອສືບຕໍ່ແກ້ໄຂບັນຫາທີ່ເກີດຂຶ້ນໃໝ່ໃນຊັ້ນຮຽນ ເຊັ່ນ: ບັນຫາໃນການວິເຄາະບົດເລື່ອງວັນນະຄະດີລາວ ຂອງນັກຮຽນຈຳນວນໜຶ່ງທີ່ບໍ່ທັນໄດ້ດີ. ນັກວິໄຈ ພວກຂ້າພະເຈົ້າຈຶ່ງຄົ້ນຄວ້າ ແລະວາງວິທີການແກ້ໄຂອອກດັ່ງນີ້:

1). ເອົາໃຈໃສ່ເປັນພິເສດ ຕໍ່ຜູ້ທີ່ມີບັນຫາ.

2). ເຮັດກິດຈະກຳເພື່ອນຊ່ວຍເພື່ອນຄື: ໃຫ້ຜູ້ບໍ່ມັກການວິເຄາະນັ່ງນຳຜູ້ມັກວິເຄາະບົດເລື່ອງວັນນະຄະດີ ແລະຈັດເຂົ້າກຸ່ມທີ່ມີນັກສຶກສາເກັ່ງ.

3). ຄູຕ້ອງແນະນຳຢ່າງໃກ້ຊິດໃນເວລາເຮັດກິດຈະກຳການວິເຄາະບົດເລື່ອງວັນນະຄະດີ.

4). ເວລາເຮັດກິດຈະກຳຊຸກຍູ້ໃຫ້ຜູ້ກ່ຽວປະກອບສ່ວນເປັນປະຈຳໃນເວລາວິເຄາະບົດເລື່ອງວັນນະຄະດີ ໂດຍການບົ່ງຕົວໃຫ້ຕອບຄຳຖາມ ຫຼື ການປະກອບຄຳເຫັນຕ່າງໆ.

5). ຕ້ອງມີແນວທາງໃນການປູກຈິດສຳນຶກໃຫ້ນັກຮຽນ ນັກຮຽນມີຄວາມຮັກ ມັກຮຽນບົດເລື່ອງວັນນະຄະດີລາວມາແຕ່ເບື້ອງຕົ້ນ.

6). ເປີດການແຂ່ງຂັນກ່ຽວກັບການຄົ້ນຄວ້າບົດເລື່ອງວັນນະຄະດີປະເພດຕ່າງໆ

ນັກວິໄຈໄດ້ເກັບກຳຂໍ້ມູນດ້ວຍວິທີການໃຊ້ແບບສອບຖາມສັງລວມຄວາມຄິດເຫັນ, ໃຊ້ຕາຕະລາງບັນທຶກຂໍ້ມູນຕົວຈິງສຳລັບການວິເຄາະຂໍ້ມູນແລ້ວສົນທະນາເພື່ອຖອດຖອນບົດຮຽນພາຍໃນໜ່ວຍງານພາສາລາວ-ວັນນະຄະດີ ເພື່ອກຳນົດບັນຫາທີ່ເກີດຂຶ້ນຕໍ່ກັບການສອນວິເຄາະບົດເລື່ອງວິຊາວັນນະຄະດີລາວ ການວິໄຈໂດຍດຳເນີນໄປຕາມ 5 ບາດກ້າວຂອງການວິໄຈພາກປະຕິບັດ.

### *3.4 ການວິເຄາະຂໍ້ມູ*

ຜູ້ວິໄຈວິເຄາະຂໍ້ມູນໂດຍ.ຜົນການວິໄຈທີ I ໃນການດຳເນີນການວິໄຈຄັ້ງນີ້ ແມ່ນການປະເມີນການຮຽນການສອນ ກິດຈະກຳໃຫ້ນັກສຶກສາວິເຄາະບົດເລື່ອງ “ສັງສິນໄຊ” 1) ຄວາມເປັນມາຂອງເລື່ອງ; 2) ເນື້ອໃນລວມສ່ອງແສງເຖິງຫຍັງ; 3) ວິເຄາະຕົວລະຄອນເຊັ່ນ: ນາງ ສຸມົນທາ, ສັງສິນໄຊ; 4) ສະຫຼຸບດ້ານເນື້ອໃນ ແລະ ສິລະປະການແຕ່ງ (ກ່ອນວິເຄາະເລື່ອງໃຫ້ນັກຮຽນ ອ່ານ ຫຼື ເລົ່າເລື່ອງໂດຍຫຍໍ້). ເພື່ອຄົ້ນພົບແນວທາງການແກ້ໄຂບັນຫາເຮັດໃຫ້ນັກສຶກສາຫັນມາສົນໃຈເຂົ້າໃຈ ການວິເຄາະບົດເລື່ອງວັນນະຄະດີລາວ ເຊິ່ງສະແດງໃຫ້ເຫັນວ່າ ຜົນການປະເມີນຂອງນັກຮຽນ

ອະທິບາຍຕາຕະລາງປະເມີນ: ນັກຮຽນວິເຄາະບົດເລື່ອງ “ສັງສິນໄຊ” 1) ຄວາມເປັນມາຂອງເລື່ອງ; 2) ເນື້ອໃນລວມສ່ອງແສງເຖິງຫຍັງ; 3) ວິເຄາະຕົວລະຄອນເຊັ່ນ: ເລື່ອງ “ສັງສິນໄຊ” 1) ຄວາມເປັນມາຂອງເລື່ອງ; 2) ເນື້ອໃນລວມສ່ອງແສງເຖິງຫຍັງ; 3) ວິເຄາະຕົວລະຄອນເຊັ່ນ: ນາງ ສຸມົນທາ, ສັງສິນໄຊ; 4) ສະຫຼຸບດ້ານເນື້ອໃນ ແລະ ສິລະປະການແຕ່ງ ຜົນການປະເມີນຂອງນັກສຶກສາມີດັ່ງນີ້:

ອີງໃສ່ສູດຄິດໄລ່ດັ່ງນີ້: $P = \frac{f \times 100}{n}$

ໃນການດຳເນີນການວິໄຈຄັ້ງນີ້ ຜ່ານການປະເມີນການຮຽນການສອນ ປະຕິບັດກິດຈະກຳໃຫ້ນັກຮຽນ ວິເຄາະບົດເລື່ອງ “ສັງສິນໄຊ” ເຊິ່ງສະແດງໃຫ້ເຫັນວ່າ ຜົນການປະເມີນຂອງນັກຮຽນດັ່ງນີ້: ນັກຮຽນທີ່ປະເມີນໄດ້ເກນອ່ອນຫຼາຍ ມີຈຳນວນ 8 ຄົນ, ເທົ່າກັບ 38.09%; ນັກຮຽນທີ່ປະເມີນໄດ້ເກນອ່ອນ ມີຈຳນວນ 7 ຄົນ, ເທົ່າກັບ 33.33%; ນັກຮຽນທີ່ປະເມີນໄດ້ເກນປານກາງ ມີຈຳນວນ 3 ຄົນ, ເທົ່າກັບ 14.28%; ນັກຮຽນທີ່ປະເມີນໄດ້ເກນດີ ມີຈຳນວນ 3 ຄົນ, ເທົ່າກັບ 14.28%; ແລະ ດີຫຼາຍ ມີຈຳນວນ 0 ຄົນ, ເທົ່າກັບ 0%. ເຫັນໄດ້ວ່າ ນັກຮຽນໃນຫ້ອງທັງໝົດຢູ່ໃນເກນ ອ່ອນຫຼາຍ ຫາ ດີ ແລະ ຢູ່ໃນເກນອ່ອນຫຼາຍ ຫາ ອ່ອນ ມີຈຳນວນມ 15 ຄົນ, ເທົ່າກັບ 71,42%; ນັກຮຽນທີ່ປະເມີນໄດ້ເກນອ່ອນຫຼາຍ ມີຈຳນວນ 10 ຄົນ, ເທົ່າກັບ 34.48%;.

ສະຖິຕິໃນການວິເຄາະຂໍ້ມູນໃນການວິໄຈຄັ້ງນີ້ ມີຄ່າສະເລ່ຍໃນການວິເຄາະຈາກແບບສອບຖາມ ການສຳຫຼວດຄວາມຄິດ ຄຳເຫັນ ຂອງນັກຮຽນໃນການຮຽນ-ການສອນ ໃນກຸ່ມເປົ້າໝາຍສາມາດຕີລາຄາ ພຶດຕິກຳບັນຫາໃນການວິເຄາະບົດເລື່ອງໃນວິຊາວັນນະຄະດີລາວ ຂອງນັກຮຽນ ດັ່ງນີ້:

ສູດຄິດໄລ່ ການປະເມີນ ສຳລັບວິເຄາະຂໍ້ມູນດັ່ງນີ້:

$$P = \frac{f \times 100}{n}$$

$P$ = ເປີເຊັນ

$f$ = ຈຳນວນຜົນການປະເມີນນັກສຶກສາ

$n$ = ຈຳນວນນັກສຶກສາທັງໝົດທີ່ປະເມີນ

ການສຶກສາປັດໄຈທີ່ເປັນຜົນຕໍ່ການຮຽນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວ ຂອງນັກຮຽນຊັ້ນມັດທະຍົມ ນັ້ນຜູ້ສຶກສາໄດ້ແປຜົນຕາມທິດສະດີທີ່ກ່ຽວຂ້ອງຂອງ ພາລະດີ ພັກດີໂຍທິນ ກໍ່ເນື່ອງມາຈາກທິດສະດີດັ່ງກ່າວໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການຮຽນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວຂອນັກຮຽນຊັ້ນມັດທະຍົມສຶກສາປີທີ 3. ສ່ວນການສຶກສາ ຄວາມມັກ ຄວາມເຂົ້າໃຈ ເພິ່ງພໍໃຈລະດັບໃດໜຶ່ງຕໍ່ການຮຽນ-ການສອນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວນັ້ນ ຜູ້ສຶກສາໄດ້ແປຜົນຕາມບົດຄົ້ນຄວ້າທີ່ກ່ຽວຂ້ອງຂອງ ໄດ້ຄົ້ນຄວ້າຕາມທິດສະດີຂອງ ກົງຈັນ ພະເມືອງ ເຊັ່ນ: ຄວາມມັກ ຄວາມເຂົ້າໃຈ ເພິ່ງພໍໃຈລະດັບໃດໜຶ່ງຕໍ່ການຮຽນ-ການສອນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວນັ້ນ ຜູ້ສຶກສາໄດ້ແປຜົນຕາມບົດຄົ້ນຄວ້າທີ່ກ່ຽວຂ້ອງ.

## 4. ຜົນການຄົ້ນຄວ້າ

ຈາກການສຶກສາ ປັດໄຈທີ່ເປັນຜົນຕໍ່ການຮຽນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວ ຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ໂຮງຮຽນມັດທະຍົມສາທິດ ວິທະຍາໄລຄູສະຫວັນນະເຂດ ສົກຮຽນ 2023-2024 ຈະເຫັນໄດ້ວ່າ ປັດໄຈທີ່ສົ່ງຜົນຕໍ່ການຮຽນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວຂອງນັກຮຽນ

**P-ISSN**: 3078-5405; **E-ISSN**: 3080-2628

ຊັ້ນມັດທະຍົມສຶກສາປີທີ 3 ແລະ ນັກຮຽນມີຄວາມມັກ ຄວາມເຂົ້າໃຈ ເພິ່ງພໍໃຈລະດັບໃດໜຶ່ງຕໍ່ການຮຽນ-ການສອນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວ ເຊິ່ງມີລາຍລະອຽດສຳຄັນດັ່ງຕໍ່ໄປນີ້

ເມື່ອຄົ້ນພົບບັນຫາຄືແນວນັ້ນ, ຜູ້ສຶກສາວິໄຈ ຫາແນວທາງການແກ້ໄຂບັນຫາເຮັດໃຫ້ນັກຮຽນທັນມາສົນໃຈ ການວິເຄາະບົດເລື່ອງວັນນະຄະດີລາວ ໂດຍໃຊ້ແບບສອບຖາມການສຳຫຼວດຄຳຄິດຄຳເຫັນຂອງນັກຮຽນພາຍໃນຫ້ອງ ເຊິ່ງສະແດງອອກດັ່ງນີ້:

**ຜົນການວິໄຈທີ I**

ໃນການດຳເນີນການວິໄຈຄັ້ງນີ້ ແມ່ນການປະເມີນການຮຽນການສອນ ກິດຈະກຳໃຫ້ນັກຮຽນວິເຄາະບົດເລື່ອງ "ສັງສິນໄຊ" 1) ຄວາມເປັນມາຂອງເລື່ອງ; 2) ເນື້ອໃນລວມສ່ອງແສງເຖິງຫຍັງ; 3) ວິເຄາະຕົວລະຄອນເຊັ່ນ: ນາງ ສຸມົນທາ, ສັງສິນໄຊ; 4) ສະຫຼຸບດ້ານເນື້ອໃນ ແລະ ສິລະປະການແຕ່ງ (ກ່ອນວິເຄາະເລື່ອງໃຫ້ນັກຮຽນ ອ່ານ ຫຼື ເລົ່າເລື່ອງໂດຍຫຍໍ້). ເພື່ອຄົ້ນພົບແນວທາງການແກ້ໄຂບັນຫາເຮັດໃຫ້ນັກຮຽນທັນມາສົນໃຈເຂົ້າໃຈ ການວິເຄາະບົດເລື່ອງວັນນະຄະດີລາວ ເຊິ່ງສະແດງໃຫ້ເຫັນວ່າ ຜົນການປະເມີນຂອງນັກຮຽນມີດັ່ງນີ້:

**ອະທິບາຍຕາຕະລາງປະເມີນ:** ນັກຮຽນວິເຄາະບົດເລື່ອງ "ສັງສິນໄຊ" 1) ຄວາມເປັນມາຂອງເລື່ອງ; 2) ເນື້ອໃນລວມສ່ອງແສງເຖິງຫຍັງ; 3) ວິເຄາະຕົວລະຄອນເຊັ່ນ: ພະຍາຈັກກີມະຫາວົງ, ນາງແຕງອ່ອນ, ເກດສຸລິຍົງຍານ; 4) ສະຫຼຸບດ້ານເນື້ອໃນ ແລະ ສິລະປະການແຕ່ງ ຜົນການປະເມີນຂອງນັກສຶກສາມີດັ່ງນີ້:

ອີງໃສ່ສູດຄິດໄລ່ດັ່ງນີ້: $P = \frac{f \times 100}{n}$

**ຕາຕະລາງສະຫຼຸບຄວາມຜົນການປະເມີນຂອງນັກຮຽນຮອບທີ 1**

| ລ/ດ | ຄ່າຂອງຄະແນນ | ຄະແນນ | ຈຳນວນຄົນ | ຄິດເປັນເປີເຊັນ % |
|---|---|---|---|---|
| 1 | ອ່ອນຫຼາຍ | 1 | 8 | 38,09 |
| 2 | ອ່ອນ | 2 | 7 | 33,33 |
| 3 | ປານກາງ | 3 | 3 | 14,28 |
| 4 | ດີ | 4 | 3 | 14,28 |
| 5 | ດີຫຼາຍ | 5 | 0 | 0 |
| **ລວມ** | | | **21** | **100** |

ໃນການດຳເນີນການວິໄຈຄັ້ງນີ້ ຜ່ານການປະເມີນການຮຽນການສອນ ປະຕິບັດກິດຈະກຳໃຫ້ນັກຮຽນ ວິເຄາະບົດເລື່ອງ "ສັງສິນໄຊ" ເຊິ່ງສະແດງໃຫ້ເຫັນວ່າ ຜົນການປະເມີນຂອງນັກຮຽນດັ່ງນີ້: ນັກຮຽນທີ່ປະເມີນໄດ້ເກນອ່ອນຫຼາຍ ມີຈຳນວນ 8 ຄົນ, ເທົ່າກັບ 38.09%; ນັກຮຽນທີ່ປະເມີນໄດ້ເກນອ່ອນຫຼາຍ ມີຈຳນວນ 7 ຄົນ, ເທົ່າກັບ 33.33%; ນັກສຶກສາທີ່ປະເມີນໄດ້ເກນປານກາງ ມີຈຳນວນ 3 ຄົນ, ເທົ່າກັບ 14.28%; ນັກສຶກສາທີ່ປະເມີນໄດ້ເກນດີ ມີຈຳນວນ 3 ຄົນ, ເທົ່າກັບ 14.28%; ແລະ ດີຫຼາຍ ມີຈຳນວນ 0 ຄົນ, ເທົ່າກັບ 0%. ເຫັນໄດ້ວ່າ ນັກຮຽນໃນຫ້ອງທັງໝົດ ຢູ່ໃນເກນ ອ່ອນຫຼາຍ ຫາ ດີ ແລະ ຢູ່ໃນເກນອ່ອນຫຼາຍ ຫາ ອ່ອນ ມີຈຳນວນມ 15 ຄົນ, ເທົ່າກັບ 71,42%;

**ຜົນການວິໄຈທີ II**

ເມື່ອຄົ້ນພົບບັນຫາຄືແນວນັ້ນ, ຜູ້ສຶກສາວິໄຈ ຈຶ່ງໄດ້ຊອກຫາແນວທາງ ເຊິ່ງຜົນຂອງການສອບຖາມການແກ້ໄຂບັນຫາທີ່ເປັນຜົນກະທົບໃນການສອນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວໃຫ້ນັກຮຽນມັດທະຍົມ ຈາກແບບສອບຖາມການສຳຫຼວດຄຳຄິດຄຳເຫັນຂອງນັກຮຽນໃນຫ້ອງປີ 3. ສະແດງອອກດັ່ງນີ້

**ສະພາບການປະຕິບັດ/ພຶດຕິກຳການສອນບັນທຶກແບບສອບຖາມ ການວິໄຈຮອບທີ 2**

5 = ມີຫຼາຍທີ່ສຸດ; 4 = ມີຫຼາຍ; 3 = ມີປານກາງ; 2 = ມີໜ້ອຍ; 1 = ມີໜ້ອຍສຸດ

| ຂໍ້ທີ | ລະດັບການປະຕິບັດ/ພຶດຕິກຳ | ປັດໄຈທີ່ເປັນຈິງ | | | | |
|---|---|---|---|---|---|---|
| | | 5 | 4 | 3 | 2 | 1 |
| I. | **ປັດໄຈທົ່ວໄປທີ່ມີຕໍ່ນັກຮຽນ** | | | | | |
| 1 | ການຊຸກຍູ້ສົ່ງເສີມການຮຽນການສອນ ວັນນະຄະດີລາວ ຈາກພາກສ່ວນກ່ຽວຂ້ອງ | 52,38 | 22,86 | 11,43 | | |
| 2 | ວິທະຍາໄລຄູສະຫວັນນະເຂດ (ຫ້ອງສະໝຸດ), ພາກສ່ວນກ່ຽວຂ້ອງ ສະໜອງປຶ້ມບົດເລື່ອງວັນນະຄະດີລາວໃຫ້ອ່ານຮັບໃຊ້ການຮຽນ-ການສອນ | 52,38 | 30,48 | 5,71 | | |
| 3 | ບົດເລື່ອງວັນນະຄະດີລາວ ຍັງເປັນເລື່ອງເລົ່າປາກຕໍ່ປາກ (ເລົ່າປາກເປົ່າ), ຍັງເປັນຄຳຮ້ອຍກອງ, ບໍ່ໄດ້ຈັດການຮຽບຮຽງ ແລະ ຈັດພິມຂຶ້ນໃໝ່. | 100 | | | | |
| 4 | ບົດເລື່ອງວັນນະຄະດີລາວ ທີ່ນຳມາຮຽນມາສອນຍັງເປັນເລື່ອງດັ່ງເດີມບໍ່ໄດ້ປະຍຸກ ບໍ່ໄດ້ນຳໄປສະແດງເປັນຮູບເງົາ, ວີດີໂອ, ສະແດງລະຄອນ ແລະ ສະແດງເທິງເວທີ. | 100 | | | | |
| 5 | ບົດເລື່ອງວັນນະຄະດີລາວ ມີບັນຫາຈາກການຄົ້ນຄວ້າຫາຢູ່ໃນອິນເຕີເນັດ (Internet) ຍັງບໍ່ມີ, ຍັງບໍ່ທັນເພິ່ງພໍໃຈ. | 95,24 | 3,81 | | | |
| 6 | ການຮຽນ-ການສອນ ວິຊາວັນນະຄະດີ ຄວນມີການໄປທັດສະນະສຶກສາ ນອກສະຖານທີ່ຕາມລາຍວິຊາ ວັນນະຄະດີ. (ຕາມຫຼັກສູດການສອນ) | 66,67 | 26,67 | | | |
| 7 | ການຮຽນ-ການສອນວິຊາວັນນະຄະດີ ຄວນມີການຈັດແຂ່ງຂັນດ້ານໃດໜຶ່ງ ປະຈຳພາກຮຽນ, ປະຈຳປີ ແລະງານສຳຄັນຕ່າງໆ | 71,43 | 15,24 | 5,71 | | |
| II. | **ປັດໄຈດ້ານນັກຮຽນ** | | | | | |
| 8 | ການຮຽນວິເຄາະບົດເລື່ອງວັນນະຄະດີ ນັກຮຽນ ຍັງຂາດການທົບທວນທິດສະດີວິທີການ, ຂັ້ນຕອນ ການວິເຄາະເລື່ອງວັນນະຄະດີ. | 80,95 | 15,24 | | | |
| 9 | ການຮຽນວິເຄາະບົດເລື່ອງວັນນະຄະດີ ນັກຮຽນບໍ່ເຄີຍສົນທະນາກັບໝູ່ຄູ່ ກ່ຽວກັບບົດເລື່ອງວັນນະຄະດີລາວ. | | | | 34,29 | 2,86 |

*Journal of Science and Teacher Education (JLSTE), 2*(1), 145-154
**P-ISSN**: 3078-5405; **E-ISSN**: 3080-2628

| | | | | | | |
|---|---|---|---|---|---|---|
| 10 | ນັກຮຽນບໍ່ເຄີຍອ່ານບົດເລື່ອງ ວັນນະຄະດີລາວ ສຸດເລື່ອງ, ບໍ່ ສາມາດຈື່ໄດ້ ແລະ ເລົ່າໄດ້. | 80,95 | 7,62 | 5,71 | | |
| 11 | ການຮຽນວິເຄາະບົດເລື່ອງ ວັນນະຄະດີລາວ ມີບັນຫາຈາກການ ສອນ ຂອງຄູ-ອາຈານ. | 33,33 | 26,67 | 20,00 | | |
| 12 | ນັກຮຽນບໍ່ມີຄວາມມັກ, ບໍ່ສົນໃຈ, ການເອົາໃຈໃສ່ໃນຄົ້ນຄວ້າ ໃນການ ຮຽນວິເຄາະບົດເລື່ອງວັນນະຄະດີ ລາວ. | | | 14,29 | 20,95 | 3,81 |
| 13 | ການຮຽນວິເຄາະບົດເລື່ອງ ວັນນະຄະດີລາວ ນັກຮຽນມີເວລາໜ້ ອຍໃນການອ່ານ, ຄົ້ນຄວ້າບົດເລື່ອງ ວັນນະຄະດີ. | 80,95 | 7,62 | 5,71 | | |
| III. | **ປັດໄຈດ້ານຄູສອນ** | | | | | |
| 14 | ການສອນບົດເລື່ອງວັນນະຄະດີ ຄູ ສອນຄວນນຳພາ ການຝຶກສະແດງ ລະຄອນ ຫຼື ບົດບາດສົມໝຸດ ຕາມ ບົດເລື່ອງ (ເປັນຕອນໃດໜຶ່ງ ຫຼື ສຸດ ບົດເລື່ອງ) ໃຫ້ຫຼາຍ. | 42,86 | 30,48 | 11,43 | | |
| 15 | ການສອນວິເຄາະບົດເລື່ອງ ວັນນະຄະດີລາວ ຄູສອນຄວນແນະ ນຳໃຫ້ເວລາອ່ານ ຄົ້ນຄວ້າບົດເລື່ອງ ວັນນະຄະດີລາວ ກ່ອນລວງໜ້າ. | 95,24 | 3,81 | | | |
| 16 | ການຮຽນ-ການສອນ ບົດເລື່ອງ ວັນນະຄະດີລາວ ຄູສອນຄວນຫາ ຮູບເງົາ ຫຼື ລະຄອນເວທີກ່ຽວກັບບົດ ເລື່ອງວັນນະຄະດີລາວທີ່ສອນໃຫ້ ຫຼາຍ. | 90,48 | 7,62 | | | |
| 17 | ການສອນວິເຄາະບົດເລື່ອງ ວັນນະຄະດີ ຄູສອນຄວນທົບທວນ ທິດສະດີວິທີການ, ຂັ້ນຕອນ ການ ວິເຄາະເລື່ອງວັນນະຄະດີກ່ອນສອນ. | 100 | | | | |
| 18 | ການສອນວິເຄາະບົດເລື່ອງ ວັນນະຄະດີ ຄູສອນຄວນໃຫ້ ນັກຮຽນມີຄວາມມັກ ຮັກການ ອ່ານຕຳລາຕ່າງໆ ເປັນຕົ້ນແມ່ນລາຍ ວິຊາວັນນະຄະດີ. | 52,38 | 38,10 | | | |
| IV | **ປັດໄຈດ້ານສິ່ງແວດລ້ອມ** | | | | | |
| 19 | <u>ສະຖານທີ່ຮຽນ</u> ຫ້ອງຮຽນມີສຽງດັງລົບກວນ | 14,29 | 19,05 | 17,14 | 9,52 | 1,90 |

ຈາກຕາຕະລາງທີ 2 ສະແດງໃຫ້ເຫັນວ່າຜົນການສອບຖາມຂອງນັກຮຽນຈຳນວນ 21 ຄົນ ໃນຮອບທີ 2 ໂດຍລວມຍັງຢູ່ໃນລະດັບອອ່ນ ເຊິ່ງສະແດງອອກດັ່ງນີ້:

- **ປັດໄຈດ້ານນັກຮຽນ:** ຜົນຂອງການສອບຖາມການແກ້ໄຂບັນຫາທີ່ເປັນຜົນກະທົບໃນການຮຽນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວໃຫ້ນັກຮຽນມັດທະຍົມສຶກສາ ມີຫຼາຍສຸດ ແມ່ນການຮຽນວິເຄາະບົດເລື່ອງວັນນະຄະດີ ນັກຮຽນ ຍັງຂາດການທົບທວນທິດສະດີວິທີການ, ຂັ້ນຕອນ ການວິເຄາະເລື່ອງວັນນະຄະດີ. ນັກຮຽນບໍ່ເຄີຍອ່ານບົດເລື່ອງວັນນະຄະດີລາວ ສຸດເລື່ອງ, ບໍ່ສາມາດຈື່ໄດ້ ແລະ ເລົ່າໄດ້.ການຮຽນວິເຄາະບົດເລື່ອງວັນນະຄະດີລາວ ນັກຮຽນມີເວລາໜ້ອຍໃນການອ່ານ, ຄົ້ນຄວ້າບົດເລື່ອງວັນນະຄະດີ. ມີ 20 ຄົນ, ຄິດເປັນເປີເຊັນ 95,23%; ຜູ້ສຶກສາວິໄຈຈຶ່ງໄດ້ນຳມາເປັນແນວທາງໃນການແກ້ໄຂບັນຫາເຮັດໃຫ້ການຮຽນວິເຄາະບົດເລື່ອງໃນວັນນະຄະດີລາວໃຫ້ນັກຮຽນຊັ້ນມັດທະຍົມສຶກສາປີທີ 3.
- **ປັດໄຈດ້ານຄູສອນ:** ຜົນຂອງການສອບຖາມການແກ້ໄຂບັນຫາທີ່ເປັນຜົນກະທົບໃນການສອນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວໃຫ້ນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ມີຫຼາຍສຸດ ແມ່ນການສອນວິເຄາະບົດເລື່ອງວັນນະຄະດີ ຄູສອນຕ້ອງທົບທວນທິດສະດີວິທີການ, ຂັ້ນຕອນ ການວິເຄາະເລື່ອງວັນນະຄະດີກ່ອນສອນ. ມີ 21 ຄົນ, ຄິດເປັນເປີເຊັນ 100%; ການສອນວິເຄາະບົດເລື່ອງວັນນະຄະດີລາວ ຄູສອນຕ້ອງແນະນຳໃຫ້ເວລາອ່ານ ຄົ້ນຄວ້າບົດເລື່ອງວັນນະຄະດີລາວ ກ່ອນລວງໜ້າ. ມີ 20 ຄົນ, ຄິດເປັນເປີເຊັນ 95,23%; ການຮຽນ-ການສອນ ບົດເລື່ອງວັນນະຄະດີລາວ ຄູສອນຕ້ອງຫາຮູບເງົາ ຫຼື ລະຄອນເວທີກ່ຽວກັບບົດເລື່ອງວັນນະຄະດີລາວທີ່ສອນໃຫ້ຫຼາຍ. ; ຜູ້ສຶກສາວິໄຈຈຶ່ງໄດ້ນຳມາເປັນແນວທາງໃນການແກ້ໄຂບັນຫາເຮັດໃຫ້ການສອນວິເຄາະບົດເລື່ອງໃນວັນນະຄະດີລາວໃຫ້ນັກຮຽນຊັ້ນມັດທະຍົມສຶກສາ.
- **ປັດໄຈຕໍ່ສິ່ງແວດລ້ອມ:** ຜົນຂອງການສອບຖາມການແກ້ໄຂບັນຫາທີ່ເປັນຜົນກະທົບໃນການຮຽນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວໃຫ້ນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ມີຫຼາຍສຸດຫາປານກາງ ແມ່ນ ສະຖານທີ່ຮຽນ: ຫ້ອງຮຽນມີສຽງດັງລົບກວນ ມີ 16 ຄົນ, ຄິດເປັນເປີເຊັນ 76,19%; ; ຜູ້ສຶກສາວິໄຈຈຶ່ງໄດ້ນຳມາເປັນແນວທາງໃນການແກ້ໄຂບັນຫາເຮັດໃຫ້ການສອນວິເຄາະບົດເລື່ອງໃນວັນນະຄະດີລາວໃຫ້ນັກຮຽນຊັ້ນມັດທະຍົມສຶກສາ.

ເຫັນໄດ້ວ່າ ການຊອກຫາແນວທາງການແກ້ໄຂປັດໄຈທີ່ເປັນຜົນກະທົບໃນການສອນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວ ແລະ ການເຫັນໄດ້ຄວາມມັກ ຄວາມເຂົ້າໃຈເພິ່ງພໍໃຈລະດັບໃດໜຶ່ງຕໍ່ການຮຽນການສອນ ວິເຄາະບົດເລື່ອງໃນວິຊາວັນນະຄະດີລາວໃຫ້ນັກຮຽນມັດທະຍົມສຶກສາຊັ້ນປີທີ 3 ຢູ່ໃນລະດັບຄວາມເພິ່ງພໍຕໍ່ການວິໄຈ.

**ຜົນການວິໄຈທີ III**

ໃນການດຳເນີນການວິໄຈຄັ້ງນີ້ ແມ່ນການປະເມີນການຮຽນການສອນ ກິດຈະກຳໃຫ້ນັກຮຽນວິເຄາະບົດເລື່ອງ "ສັງສິນໄຊ" 1) ຄວາມປັນມາຂອງເລື່ອງ; 2) ເນື້ອໃນລວມ; 3) ວິເຄາະຕົວລະຄອນເຊັ່ນ: ນາງ ສຸມຸນທາ, ສັງສິນໄຊ; 4) ສະຫຼຸບດ້ານເນື້ອໃນ ແລະ ສິລະປະການແຕ່ງ (ກ່ອນວິເຄາະເລື່ອງໃຫ້ນັກຮຽນ ອ່ານ ຫຼື ເລົ່າເລື່ອງໂດຍຫຍໍ້). ເຊິ່ງສະແດງໃຫ້ເຫັນວ່າ ຜົນການປະເມີນຂອງນັກສຶກສາມີດັ່ງນີ້:

- **ອະທິບາຍຕາຕະລາງປະເມີນ:** ນັກຮຽນວິເຄາະບົດເລື່ອງ "ສັງສິນໄຊ". 1) ຄວາມເປັນມາຂອງເລື່ອງ; 2) ເນື້ອໃນລວມສ່ອງແສງເຖິງຫຍັງ; 3) ວິເຄາະຕົວລະຄອນເຊັ່ນ: , ນາງ ສຸມົນທາ, ສັງສິນໄຊ; 4) ສະຫຼຸບດ້ານເນື້ອໃນ ແລະ ສິລະປະການແຕ່ງ ຜົນການປະເມີນຂອງນັກຮຽນມີດັ່ງນີ້:

ອີງໃສ່ສູດຄິດໄລ່ດັ່ງນີ້: $P = \frac{f \times 100}{n}$

- **ຕາຕະລາງສະຫຼຸບຄວາມຜົນການປະເມີນ ສະແດງອອກແນວນີ້ ໃນຮອບທີ 3**

| ລ/ດ | ຄ່າຂອງຄະແນນ | ຄະແນນ | ຈຳນວນຄົນ | ຄິດເປັນເປີເຊັນ % |
|---|---|---|---|---|

| | | | | |
|---|---|---|---|---|
| 1 | ອ່ອນຫຼາຍ | 1 | 0 | 0 |
| 2 | ອ່ອນ | 2 | 2 | 9,52 |
| 3 | ປານກາງ | 3 | 12 | 57,14 |
| 4 | ດີ | 4 | 5 | 23,80 |
| 5 | ດີຫຼາຍ | 5 | 2 | 9,52 |
| **ລວມ** | | | **21** | **100** |

ໃນການດຳເນີນການວິໄຈຄັ້ງນີ້ ຜ່ານການປະເມີນການຮຽນການສອນ ປະຕິບັດກິດຈະກຳໃຫ້ນັກຮຽນ ວິເຄາະບົດເລື່ອງ "ສັງສິນໄຊ" ເຊິ່ງສະແດງໃຫ້ເຫັນວ່າ ຜົນການປະເມີນຂອງນັກຮຽນດັ່ງນີ້: ນັກຮຽນທີ່ປະເມີນໄດ້ເກນອ່ອນຫຼາຍ ມີຈຳນວນ 0 ຄົນ, ເທົ່າກັບ 0%; ນັກຮຽນທີ່ປະເມີນໄດ້ເກນອ່ອນມີຈຳນວນ 2 ຄົນ, ເທົ່າກັບ 9,52%; ນັກຮຽນທີ່ປະເມີນໄດ້ເກນປານກາງ ມີຈຳນວນ 12 ຄົນ, ເທົ່າກັບ 57,14%; ນັກຮຽນທີ່ປະເມີນໄດ້ເກນດີ ມີຈຳນວນ 5 ຄົນ, ເທົ່າກັບ 23,80%; ແລະ ດີຫຼາຍ ມີຈຳນວນ 2 ຄົນ, ເທົ່າກັບ 9,52%. ເຫັນໄດ້ວ່າ ນັກຮຽນໃນຫ້ອງທັງໝົດ ຢູ່ໃນເກນ ອ່ອນຫຼາຍ ຫາ ດີຫຼາຍ ແລະ ຢູ່ໃນເກນອ່ອນຫຼາຍ ຫາ ອ່ອນ ມີຈຳນວນມ 2 ຄົນ, ເທົ່າກັບ 9,52%; ຢູ່ໃນເກນປານກາງ ຫາ ດີຫຼາຍ ມີຈຳນວນ 19 ຄົນ, ເທົ່າກັບ 90,47%.

ເຫັນໄດ້ວ່າ ການຊອກຫາແນວທາງການແກ້ໄຂປັດໄຈທີ່ເປັນຜົນກະທົບໃນການສອນວິເຄາະບົດເລື່ອງໃນວິຊາວັນນະຄະດີລາວ ແລະ ການເຫັນໄດ້ຄວາມມັກ ຄວາມເຂົ້າໃຈເພິ່ງພໍໃຈລະດັບໃດໜຶ່ງຕໍ່ການຮຽນການສອນ ວິເຄາະບົດເລື່ອງໃນວິຊາວັນນະຄະດີລາວໃຫ້ນັກຮຽນມັດທະຍົມສຶກສາຊັ້ນປີທີ 3 ຢູ່ໃນລະດັບຄວາມເພິ່ງພໍຕໍ່ການວິໄຈ.

## 5.ອະພິປາຍຜົນ

ປັດໄຈທີ່ສົ່ງຜົນຕໍ່ການຮຽນວິເຄາະບົດເລື່ອງໃນວິຊາວັນນະຄະ ດີລາວຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ໂຮງຮຽນ ມສ ສາທິດມີ 3 ປັດໄຈຄື ປັດໄຈ ດ້ານບຸກຄະລິກກະພາບພຶດຕິກຳການຮຽນວິຊາວັນນະຄະດີ, ຄວາມສຳພັນລະຫວ່າງນັກຮຽນກັບຄູ ແລະ ຄວາມສຳພັນລະຫວ່າງນັກຮຽນກັບເພື່ອນດ້ວຍກັນ ດັ່ງລາຍລະອຽດຕໍ່ໄປນີ້:

- ພຶດຕິກຳການຮຽນວິຊາວັນນະຄະດີມີຄວາມສຳພັນທາງບວກກັບບັນຫາການຮຽນວິຊາວັນນະຄະດີຂອງນັກຮຽນຊັ້ນມັດທະຍົມປີທີ 3ໂຮງຮຽນ ມສ ສາທິດ ຢ່າງມີຄວາມສຳຄັນອັນດັບໜຶ່ງ ສະແດງວ່ານັກຮຽນມີພຶດຕິກຳໃນການຮຽນດີ ມີບັນຫາໃນການຮຽນວັນນະຄະດີໜ້ອຍ ນັກຮຽນມີການເນັ້ນສູດສຳຄັນທີ່ຕ້ອງໃຊ້ການຄຳນຶງເຖິງຫຼັກການວິເຄາະເປັນປະຈຳ ຂະນະທີ່ຄູສອນ ຈົດບັນທຶກເນື້ອຫາສຳຄັນລົງໃນປຶ້ມຂອງຕົນເອງ ແລະ ຮ່ວມກິດຈະກຳໃນຫ້ອງຮຽນ ສະເໜີຄວາມຄິດເຫັນຕໍ່ຄູໃນການວິເຄາະເລື່ອງ ມີການປຶກສາສົນທະນາກັບຄູ ກ່ຽວກັບເນື້ອໃນທີ່ຈະຮຽນຈະທົບທວນ ແລະ ຈົດບັນທຶກໃນສິ່ງທີ່ຮຽນແຕ່ລະວັນນຳບົດເຝິກຫັດ ຫຼື ເນື້ອໃນທີ່ບໍ່ເຂົ້າໃຈໃຫ້ໄປຖາມຄູ ໃຊ້ເວລາວ່າງເຮັດວຽກບ້ານ ແລະ ບົດຝຶກຫັດວິຊາວັນນະຄະດີ ເຊິ່ງສອດຄ່ອງກັບບົດວິໄຈຂອງ ສຸວະພັດ ແກ້ວກ້າ (2011) " ປັດໄຈທີ່ສົ່ງຜົນຕໍ່ບັນຫາການຮຽນຂອງນັກຮຽນຊ່ວງຊັ້ນທີ 2 ໂຮງຮຽນວັດເມທັງກຣາວາສ(ເທດລັດຣາດຖະນຸກູນ) ຈັງຫວັດແພຣ ພົບວ່ານິໄສທາງການຮຽນມີຄວາມສຳພັນທາງລົບກັບບັນຫາການຮຽນຂອງນັກຮຽນ

ດັ່ງນັ້ນ ພຶດຕິກຳການຮຽນວິຊາວັນນະຄະດີຈຶ່ງມີຄວາມສຳພັນທາງບວກກັບບັນຫາການຮຽນວິຊາວັນນະຄະດີຂອງນັກຮຽນຊັ້ນມັດທະຍົມປີທີ 3 ໂຮງຮຽນ ມສ ສາທິດ.

- ຜົນກະທົບລະຫວ່າງນັກຮຽນກັບຜູ້ປົກຄອງມີຜົນກະທົບທາງບວກກັບບັນຫາການຮຽນວິຊາວັນນະຄະດີຂອງນັກຮຽນຊັ້ນມັດທະຍົມປີທີ 3 ຮງຮຽນ ມສ ສາທິດ.ສະແດງວ່ານັກຮຽນມີຜົນກະທົບລະຫວ່າງຜູ້ປົກຄອງຄືມີບັນຫາທາງດ້ານການຮຽນໜ້ອຍ ທັງນີ້ເພາະການທີ່ນັກຮຽນມີຄວາມສຳພັນທີ່ດີກັບຜູ້ປົກຄອງ ນັກຮຽນມີການປະຕິບັດທີ່ດີຕໍ່ຜູ້ປົກຄອງ ແລະ ຜູ້ປົກຄອງປະຕິບັດທີ່ດີຕໍ່ນັກຮຽນດັ່ງນີ້ ເມື່ອນັກຮຽນມີບັນຫາກ່ຽວກັບການຮຽນຈະພ້າວປຶກສາຜູ້ປົກຄອງ ແລະ ຈະດີໃຈຫຼາຍເມື່ອຜູ້ປົກຄອງສືບຖາມກ່ຽວກັບການຮຽນສະແດງຄວາມຮັກໂດຍການກ່າວຊົມເຊີຍເມື່ອເສັງໄດ້ຄະແນນດີ ຜູ້ປົກຄອງແນະນຳວິທີການອ່ານໜັງສື ແລະ ສອນແກ້ວຽກບ້ານວິຊາວັນນະຄະດີ ເຊິ່ງການປະຕິບັດດັ່ງກ່າວເຮັດໃຫ້ນັກຮຽນມີບັນຫາທາງການຮຽນໜ້ອຍ ເຊິ່ງສອດຄ່ອງກັບບົດວິໄຈຂອງ ສຸວະພັດ ແກ້ວກ້າ (2011) ສະແດງວ່ານັກຮຽນທີ່ມີສຳພັນທະພາບດີກັບຜູ້ປົກຄອງມີພຶດຕິກຳການຮຽນວິຊາວັນນະຄະດີເໝາະສົມ.

ດັ່ງນັ້ນ ຜົນກະທົບລະຫວ່າງນັກຮຽກັບຜູ້ປົກຄອງມີຜົນກະທົບທາງບວກກັບບັນຫາການຮຽນວິຊາວັນນະຄະດີຂອງນັກຮຽນຊັ້ນມັດທະຍົມປີທີ 3 ໂຮງຮຽນ ມສ ສາທິດ.

ຜົນກະທົບລະຫວ່າງນັກຮຽນກັບຄູມີຜົນກະທົບທາງບວກກັບບັນຫາການຮຽນວິຊາວັນນະຄະດີຂອງນັກຮຽນຊັ້ນມັດທະຍົມປີທີ 3 ໂຮງຮຽນ ມສ ສາທິດ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ.01 ສະແດງວ່ານັກຮຽນທີ່ມີສຳພັນທະພາບດີກັບຄູມີບັນຫາທາງການຮຽນວິຊາວັນນະຄະດີໜ້ອຍ ທັງນີ້ເພາະຜົນກະທົບລະຫວ່າງນັກຮຽນກັບຄູເປັນການປະຕິບັດຂອງນັກຮຽນຕໍ່ຄູ ແລະ ການປະຕິບັດຂອງຄູຕໍ່ນັກຮຽນ ທັງໃນ ແລະ ນອກຫ້ອງຮຽນ ເພື່ອໃຫ້ເກີດຄວາມສຳພັນທີ່ດີຕໍ່ກັນລາຍລະອຽດດັ່ງຕໍ່ໄປນີ້: ນັກຮຽນສາມາດປຶກສາເລື່ອງການຮຽນວິຊາວັນນະຄະດີກັບຄູໄດ້ ນັກຮຽນສົ່ງວຽກບ້ານຕາມທີ່ຄູກຳນົດສະເໝີ ຕັ້ງໃຈຮຽນວິຊາວັນນະຄະຄູໃຫ້ຄຳປຶກສາ ແລະ ແນະນຳດີໃນຂະນະທີ່ຄູສອນ ຄູເອົາໃສ່ນັກຮຽນທຸກຄົນໃນຫ້ອງ ແລະ ຮັບຟັງເຫດຜົນຂອງນັກຮຽນ ຄູໃຫ້ຄຳປຶກສາ ແລະ ແນະນຳນັກຮຽນເມື່ອນັກຮຽນມີບັນຫາດ້ານການຮຽນດັ່ງທີ່ ພາວິນີ ສຸທິພິເຊັດພັນ (2545, ໜ້າ 144) ພົບວ່າ ນັກສຶກສາພະຍາບານທີ່ມີສຳພັນທະພາບລະຫວ່າງ

ນັກສຶກສາກັບອາຈານຜູ້ສອນຕ່າງກັນ ມີການປັບຕົວແຕກຕ່າງກັນທຸກດ້ານຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ.05 ສະຫຼຸບໄດ້ວ່າປະຕິສຳພັນທີ່ດີລະຫວ່າງນັກຮຽນກັບຄູມີສ່ວນຊ່ວຍໃຫ້ການຮຽນການສອນປະສົບຜົນສຳເລັດ ດັ່ງນັ້ນ ຄູຈຶ່ງມີສ່ວນສຳຄັນຫຼາຍຕໍ່ພຶດຕິກຳການຮຽນຂອງນັກຮຽນ ກໍ່ຄືຖ້າຄູກັບນັກຮຽນມີສຳພັນທະພາບທີ່ດີຕໍ່ກັນບັນຍາກາດການຮຽນການສອນຈະດີ ນັກຮຽນຈະມີພຶດຕິກຳການຮຽນທີ່ເໝາະສົມ

ດັ່ງນັ້ນ ສຳພັນທະພາບລະຫວ່າງຄູກັບນັກຮຽນມີຄວາມສຳພັນທາງບວກກັບບັນຫາການຮຽນວິຊາວັນນະຄະດີຂອງນັກຮຽນຊັ້ນມັດທະຍົມປີທີ 3 ໂຮງຮຽນ ມສ ສາທິດ

- ສຳພັນທະພາບລະຫວ່າງນັກຮຽນກັບເພື່ອນມີຄວາມສຳພັນທາງບວກກັບບັນການຮຽນວິຊາວັນນະຄະດີຂອງນັກຮຽນຊັ້ນມັດທະຍົມປີທີ 3 ໂຮງຮຽນ ມສ ສາທິດ ທີ່ມີຄວາມສຳຄັນອັນດັບໜຶ່ງສະແດງວ່ານັກຮຽນທີ່ມີສຳພັນທະພາບດີກັບເພື່ອນມີບັນຫາການຮຽນວິຊາວັນນະຄະດີໜ້ອຍ ທັງນີ້ເພາະວ່າສຳພັນທະພາບລະຫວ່າງນັກຮຽນກັບເພື່ອນເປັນການປະຕິບັດຕົນດັ່ງນີ້ ນັກຮຽນເຮັດກິດຈະກຳກຸ່ມຮ່ວມກັບເພື່ອນໃນຫ້ອງຮຽນຢ່າງມີຄວາມສຸກ ເມື່ອເພື່ອນມີບັນຫາໃນການແກ້ບົດຝຶກຫັດໃນການວິເຄາະເລື່ອງໃນວັນນະຄະດີ ຂ້າພະເຈົ້າຢາກໃຫ້ຄວາມຊ່ວຍເຫຼືອ ເມື່ອຄູໃຫ້ເຮັດວຽກເປັນກຸ່ມວິຊາວັນນະຄະດີ ຂ້າພະເຈົ້າຈະມັກເຮັດວຽກຄົນດຽວເມື່ອຂ້າພະເຈົ້າບໍ່ເຂົ້າໃຈບົດຮຽນວັນນະຄະດີ ເພື່ອນຄົນອື່ນທີ່ຮຽນຮູ້ເລື່ອງຈະຊ່ວຍອະທິບາຍເມື່ອຮຽນວິຊາວັນນະຄະດີ ເພື່ອນຕ່າງຄົນຕ່າງເຮັດກິດຈະກຳຂ້າພະເຈົ້າມັກນຳໂຈດວັນນະຄະດີມາຮ່ວມຄິດກັບເພື່ອນສະເໝີ ສອດຄ່ອງກັບບົດວິໄຈຂອງ ສຸວະພັດ ແກ້ວກ້າ (2011) ພົບວ່າສຳພັນທະພາບລະຫວ່າງນັກຮຽນກັບເພື່ອນບໍ່ມີຄວາມສຳພັນກັບພຶດຕິກຳການຮຽນວິຊາວັນນະຄະດີຂອງນັກຮຽນຊັ້ນມັດທະຍົມປີທີ 3 ໂຮງຮຽນ ມສ ສາທິດ

ປັດໃຈທີ່ມີຄວາມສຳພັນທາງບວກກັບບັນຫາການຮຽນວິຊາວັນນະຄະດີຂອງນັກຮຽນຊັ້ນມັດທະຍົມປີທີ 3 ໂຮງຮຽນ ມສ ສາທິດຢ່າງມີຄວາມສຳຄັນທາງສະຖິຕິທີ່ອັນດັບ.05ມີ ປັດໃຈດ້ານລັກສະນະທາງກາຍະພາບທາງການຮຽນວິຊາວັນນະຄະດີ: ລັກສະນະທາງກາຍະພາບທາງການຮຽນວິຊາວັນນະຄະດີມີຄວາມສຳພັນທາງບວກກັບບັນຫາການຮຽນວິຊາວັນນະຄະດີຂອງນັກຮຽນຊັ້ນມັດທະຍົມປີທີ 3 ໂຮງຮຽນ ມສ ສາທິດ ທີ່ມີຄວາມສຳຄັນທາງສະຖິຕິລະດັບ.05 ສະແດງວ່ານັກຮຽນທີ່ໄດ້ຮັບລັກສະນະທາງກາຍະພາບທາງການຮຽນວິຊາວັນນະຄະດີມີພຶດຕິກຳການຮຽນວິຊາວັນນະຄະດີເໝາະສົມ ທັງນີ້ພະລັກສະນະທາງກາຍະພາບການຮຽນວິຊາວັນນະຄະດີເປັນສິ່ງແວດລ້ອມທາງການຮຽນທີ່ເຮັດໃຫ້ນັກຮຽນສາມາດຮຽນຮູ້ວິຊາວັນນະຄະດີໄດ້ຢ່າງມີປະສິດທິພາບໄດ້ແກ່ ສະຖານທີ່ຮຽນ ແລະ ສື່ອຸປະກອນທາງການຮຽນ ດັ່ງມີລາຍລະອຽດຕໍ່ໄປນີ້ ສະຖານທີ່ຮຽນວັນນະຄະດີໄດ້ແກ່ ຫ້ອງຮຽນມີຄວາມສະອາດເປັນລະບຽບຮຽບຮ້ອຍ ມີແສງສະຫວ່າງທີ່ພຽງພໍ ແລະ ມີອາກາດຖ່າຍເທໄດ້ສະດວກ ໂຕະ ຕັ່ງມີພຽງພໍກັບຈຳນວນນັກຮຽນ ແລະ ສາມາດໃຊ້ງານໄດ້ດີ, ອຸປະກອນທີ່ໃຊ້ໃນການຮຽນ-ການສອນທັນສະໄໝພຽງພໍກັບຈຳນວນນັກຮຽນ ແລະ ສາມາດໃຊ້ງານໄດ້ດີເຊັ່ນ ຄ້ອມພິວເຕີ້, ໂປແຈັກເຕີ້ ສື່ປະກອບການຮຽນວັນນະຄະດີທັນສະໄໝ ແລະ ພຽງພໍກັບຈຳນວນນັກຮຽນເຊິ່ງສອດຄ່ອງກັບວັນໄຊ ຊ່ອງດາລາກູນ (2538, ໜ້າ 11) ກ່າວວ່າ ອາຄານສະຖານທີ່ຂອງສະຖານທີ່ການສຶກສານັບວ່າເປັນອົງປະກອບສຳຄັນທີ່ເຮັດໃຫ້ການຈັດການສຶກສາບັນລຸຈຸດປະສົງ ເພາະຖ້າມີອາຄານສະຖານທີ່ ແລະ ສິ່ງແວດລ້ອມທີ່ດີແລ້ວ ຍ່ອມເຮັດໃຫ້ເກີດບັນຍາກາດ ແລະ ແຮງຈູງໃຈໃນການຮຽນ ຕະຫຼອດຈົນດຳເນີນກິດຈະກຳຕ່າງໆ ທີ່ສົ່ງເສີມໃຫ້ເກີດການຮຽນຮູ້ທີ່ດີ.ພົບວ່າລັກສະນະທາງກາຍະພາບທາງການຮຽນວິຊາວັນນະຄະດີມີຄວາມສຳພັນທາງບວກກັບພຶດຕິກຳການຮຽນວິຊາວັນນະຄະດີຂອງນັກຮຽນຊັ້ນມັດທະຍົມປີທີ 3 ໂຮງຮຽນ ມສ ສາທິດ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ.01 ສະແດງວ່ານັກຮຽນທີ່ໄດ້ຮັບລັກສະນະທາງກາຍະພາບທາງການຮຽນວິຊາວັນນະຄະດີ.

## 6. ສະຫຼຸບຜົນ

ການວິໄຈຄັ້ງນີ້ມີຈຸດປະສົງຄື ເພື່ອສຶກສາປັດໃຈທີ່ສົ່ງຜົນຕໍ່ການຮຽນວິເຄາະບົດເລື່ອງ ໃນວິຊາວັນນະຄະດີລາວຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ໂຮງຮຽນມັດທະຍົມສາທິດວິທະຍາໄລຄູສະຫວັນນະເຂດ. ຜົນການຄົ້ນຄວ້າສະຫຼຸບໄດ້ວ່າດ້ານນັກຮຽນແມ່ນປັດໃຈທີ່ສົ່ງຜົນຕໍ່ການວິເຄາະບົດເລື່ອງໃນວິຊາວັນນະຄະດີລາວ ຢູ່ໃນລະດັບຫຼາຍທີ່ສຸດແມ່ນການຮຽນວິເຄາະບົດເລື່ອງວັນນະຄະດີ ນັກຮຽນຍັງຂາດການທົບທວນທິດສະດີວິທີການ, ຂັ້ນຕອນ ການວິເຄາະເລື່ອງວັນນະຄະດີ. ນັກຮຽນບໍ່ເຄີຍອ່ານບົດເລື່ອງວັນນະຄະດີລາວ ສຸດເລື່ອງ, ບໍ່ສາມາດຈື່ໄດ້ ແລະ ເລົ່າໄດ້. ການຮຽນວິເຄາະບົດເລື່ອງວັນນະຄະດີລາວ ນັກຮຽນມີເວລາໜ້ອຍໃນການອ່ານ. ສຳລັບດ້ານຄູສອນເຫັນວ່າມີຄວາມຮູ້ຄວາມເຂົ້າໃຈສາມາດຖ່າຍທອດຄວາມຮູ້ໃຫ້ກັບນັກຮຽນໃນການອະທິບາຍດ້ວຍພາສາທີ່ເຂົ້າໃຈງ່າຍ ຄູໄດ້ທົບທວນທິດສະດີວິທີການ, ຂັ້ນຕອນ ການວິເຄາະເລື່ອງວັນນະຄະດີກ່ອນສອນ.ແຕ່ຄູຄວນແນະນຳໃຫ້ນັກຮຽນອ່ານເລື່ອງກ່ອນລ່ວງໜ້າ, ມີຮູບເງົາ ຫຼື ລະຄອນເວທີ ເພື່ອໃຫ້ຜູ້ຮຽນຈື່ ສາມາດວິເຄາະເລື່ອງໄດ້. ສຳລັບດ້ານສິ່ງແວດລ້ອມເຫັນວ່າເປັນປັດໃຈທີ່ສົ່ງຜົນຕໍ່ການວິເຄາະບົດເລື່ອງໃນວິຊາວັນນະຄະດີລາວ ຢູ່ໃນລະດັບຫຼາຍສຸດຫາປານກາງ ແລະ ປັດໃຈດ້ານສະຖານທີ່ຮຽນເຫັນວ່າຫ້ອງຮຽນມີສຽງດັງລົບກວນເວລາຮຽນ. ສຳລັບຄວາມ ເພິ່ງພໍໃຈເຫັນວ່າຢູ່ໃນລະດັບດີ.

**P-ISSN**: 3078-5405; **E-ISSN**: 3080-2628

## 7. ຂໍ້ສະເໜີແນະ

ການສອນວິເຄາະບົດເລື່ອງຄູຄວນດຳເນີນໄປຕາມຫຼັກການ, ວິທີ ແລະ ຂັ້ນຕອນ.

ຄູຜູ້ສອນວິເຄາະບົດເລື່ອງຕ້ອງໄດ້ເຊື່ອມໂຍງຄວາມຮູ້ໃໝ່ ແລະ ຄວາມຮູ້ເກົ່າໃຫ້ແກ່ນັກຮຽນເປັນຕົ້ນ: ດ້ານການພັນລະນາ, ການວິເຄາະຕົວລະຄອນ, ການວິເຄາະເນື້ອໃນ.

ການສອນວິເຄາະບົດເລື່ອງຄູສອນຕ້ອງມີວິທີສອນ ແລະ ກິດຈະກຳການສອນທີ່ຫຼາກຫຼາຍ ເພື່ອໃຫ້ນັກຮຽນໄດ້ຮຽນຮູ້ການວິເຄາະທີ່ຖືກຕ້ອງຕາມວິທີ.

ສຳລັບການຄົ້ນຄວ້າໃນຕໍ່ໜ້າການສ້າງແບບສອບຖາມປັດໄຈທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນທີ່ມີຕໍ່ການຈັດການຮຽນການສອນ ວິຊາວັນນະຄະດີລາວ ເປັນໃນຮູບແບບຂອງການສຳພາດ ຫຼື ການໃຫ້ນັກຮຽນສະແດງຄວາມຄິດເຫັນແດ່ກໍ່ໄດ້ ຫຼື ອາດຈະລອງປຽບທຽບປັດໄຈທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນທີ່ມີຕໍ່ການຮຽນວິຊາວັນນະຄະດີລາວກັບວິຊາອື່ນໆ ເພື່ອທີ່ຈະເກັບກຳຂໍ້ມູນເພື່ອເປັນປະໂຫຍດໃນການພັດທະນາການຮຽນ-ການສອນຕໍ່ໄປ.

## 8. ຂໍ້ຈຳກັດຂອງການຄົ້ນຄ້ວາ

1. ເນື່ອງຈາກວ່າການສຶກສາປັດໄຈທີ່ສົ່ງຜົນຕໍ່ການວິເຄາະບົດເລື່ອງໃນວັນນະຄະດີລາວ ແມ່ນການສຶກສາແບບປະລິມານ ໂດຍໃຊ້ການອະທິບາຍ ວິເຄາະ ແລະ ຍົກຕົວຢ່າງມາປະກອບເປັນການສຶກສາທີ່ຕ້ອງການຜົນໄດ້ຮັບເປັນເນື້ອໃນໃຈຄວາມ ຈຶ່ງມີຂໍ້ຈຳກັດທາງດ້ານເອກະສານ ແລະ ທິດສະດີທີ່ກ່ຽວຂ້ອງ ທີ່ເປັນພາສາລາວຍັງບໍ່ຫຼາຍ.

2. ໃນການສຶກສາຜ່ານມາຫົວຂໍ້ນີ້ຍັງບໍ່ມີຜູ້ຂຽນ ຈຶ່ງເຮັດໃຫ້ການຊອກຫາຂໍ້ມູນຈຳກັດ

## 9. ເອກະສານອ້າງອີງ


ຄຳສອນ ທອງມີໄຊ ແລະ ກົງຈັນ ພະເມືອງ. (2002). *ທິດສະດີວັນນະຄະດີ ວິທະຍາໄລວິທະຍາສາດພື້ນຖານ.* ມະຫາວິທະຍາໄລແຫ່ງຊາດ.

ພາກວິຊາສ້າງຄູ ຈິດຕະວິທະຍາການສຶກສາ. (2012). *ຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດ.*

ພິມພັນ ເດຊະຄຸ. ( 2001). *ການຮຽນ-ການສອນທີ່ເນັ້ນຜູ້ຮຽນເປັນສຳຄັນ.*

ບັນລື ພຶກສະຫວັນ. (1991). *ຍຸດທະສາດການສອນຕາມແນວທາງຫຼັກສູດໃໝ່.*

ຄູນມີ ພິມມະນີວົງ. (2022). *ວິທະຍານິພົນເນື້ອໃນກອນລຳຄອນສະຫວັນ.*

ສິນນະວົງ ມອນມະນີ ພ້ອມຄະນະ. (2009). *ປື້ມຫຼັກການສອນມັດທະຍົມຕົ້ນ 2, ສາຍສ້າງຄູມັດທະຍົມຕົ້ນ, ລະບົບ 11+3, ປີທີ 2.* ກົມສ້າງຄູ, ກະຊວງສຶກສາທິການ. ນະຄອນຫຼວງວຽງຈັນ ພິມທີ່ Nhan Dan Printing House HCMC.

ເອກະສານ ການວິໄຈພາກປະຕິບັດ. (2002). *ສຳລັບນັກສຶກສາລາວ ເອກະສານການຮຽນການສອນ*, ກົມສ້າງຄູ, ກະຊວງສຶກສາທິການ, ວຽງຈັນ, ສ ປ ປ ລາວ

ວັນນະສຸກ ໂດດໄຊ ພ້ອມຄະນະ. (2008). *ປື້ມວັນນະຄະດີລາວ 1, ສາຍສ້າງຄູມັດທະຍົມ, ລະບົບ 11+3, ປີທີ 2.* ກົມສ້າງຄູ, ກະຊວງສຶກສາທິການ. ນະຄອນຫຼວງວຽງຈັນ ໂຮງພິມສຶກສາ.

ສຸວະພັດ ແກ້ວກ້າ. (2554). *ສາລະນິພົນ ປັດໄຈທີ່ສົ່ງຜົນຕໍ່ບັນຫາການຮຽນຂອງນັກຮຽນຊ່ວງຊັ້ນທີ 2 ໂຮງຮຽນວັດມະຮັງກາວາດ.* (ເທດຮັດຣາດຊະນຸກູນ) ຈັ່ງຫວັດແພຣ

ປຣິຍາການສີ ພັກດີໂຍທິນ. (2560). *ປັດໄຈທີ່ສົ່ງຜົນຕໍ່ຄວາມສຸກໃນການຮຽນຜົນສຳພັດທາງການຮຽນ ແລະ ທັກສະຂະບວນການທາງວິທະຍາສາດຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ສັງກັດສຳນັກງານເຂດພື້ນທີ່ການສຶກສາຊັ້ນມັດທະຍົມສຶກສາເຂດ 2*